# ຂ່າວດີທີ່ເຂົາເຈົ້າຢາກໃຫ້ເຈົ້າໄດ້ຍິນ

ເມື່ອພະເຍຊູຢູ່ເທິງແຜ່ນດິນໂລກ ສາວົກມາຫາພະອົງແລະຖາມວ່າ "ການທັງຫລາຍນີ້ຈະບັງເກີດມາເວລາໃດ ແລະສິ່ງໃດຈະເປັນສຳຄັນວ່າພະອົງສະເດັດມາແລະເປັນທີ່ສຸດແຫ່ງໂລກນີ້"? ພະອົງຕອບວ່າ ຈະມີສົງຄາມລະຫວ່າງປະເທດຕໍ່ປະເທດ, ຄວາມອຶດຢາກ, ໂລກລະບາດ, ແຜ່ນດິນໄຫວ, ການລະເລີຍກົດຫມາຍເພີ່ມຂຶ້ນ, ຜູ້ສອນສາສະຫນາປອມຊັກນຳຫລາຍຄົນໃຫ້ຫລົງຜິດ, ການກຽດຊັງແລະຂົ່ມເຫງຕໍ່ເຫລົ່າສາວົກແທ້ຂອງພະອົງ, ຄວາມຮັກຕໍ່ຄວາມຊອບທຳຂອງຫລາຍຄົນຈະຫນ້ອຍລົງ. ເມື່ອສິ່ງເຫລົ່ານີ້ເລີ່ມເກີດຂຶ້ນກໍສະແດງວ່າພະຄລິດໄດ້ມາປະທັບຢ່າງທີ່ບໍ່ປາກົດແກ່ຕາ ແລະລາຊະອານາຈັກຝ່າຍສະຫວັນມາໃກ້ແລ້ວ. ນີ້ເປັນຂ່າວດີ! ດັ່ງນັ້ນ ພະເຍຊູຈຶ່ງໄດ້ກ່າວເສີມຖ້ອຍຄຳເຫລົ່ານີ້ເຊິ່ງເປັນສ່ວນຫນຶ່ງຂອງເຄື່ອງຫມາຍວ່າ "ຄຳປະເສີດນີ້ແຫ່ງແຜ່ນດິນຂອງພະເຈົ້າຈະເປັນທີ່ເທສະຫນາປ່າວປະກາດໄປທົ່ວແຜ່ນດິນໂລກ ເພື່ອຈະເປັນພິຍານແກ່ພວກຕ່າງປະເທດທັງປວງ ແລະເມື່ອນັ້ນທີ່ສຸດຈະມາເຖິງແລ້ວ."—ມັດທາຍ 24:3-14.

ຕາມຮູບການແລ້ວ ເຫດການທີ່ເກີດຂຶ້ນໃນໂລກເມື່ອບໍ່ດົນມານີ້ມີແຕ່ເລື່ອງບໍ່ດີ ແຕ່ວ່າສິ່ງທີ່ເຫດການເຫລົ່ານີ້ເລັງເຖິງແມ່ນການປະທັບຂອງພະຄລິດ ຈຶ່ງຖືວ່າເປັນເລື່ອງດີ. ສະພາບການທີ່ກ່າວເຖິງຕອນຕົ້ນນັ້ນເລີ່ມເຫັນແຈ້ງໃນປີ 1914 ເຊິ່ງເປັນປີທີ່ມີການປະກາດເຖິງຢ່າງກວ້າງຂວາງ! ນັ້ນເປັນປີທີ່ເວລາກຳນົດຂອງພວກຕ່າງປະເທດສິ້ນສຸດລົງ ແລະເປັນເວລາການເລີ່ມຕົ້ນທີ່ມີການປ່ຽນແປງຈາກການປົກຄອງຂອງມະນຸດໄປສູ່ການປົກຄອງພັນປີຂອງພະຄລິດ.

ໄລຍະແຫ່ງການປ່ຽນແປງນັ້ນບອກໄວ້ໃນພະທຳຄຳເພງບົດ 110 ຂໍ້ 1 ແລະ 2 ແລະຄຳປາກົດ 12:7-12. ຂໍ້ເຫລົ່ານີ້ສະແດງວ່າພະຄລິດນັ່ງຢູ່ເບື້ອງຂວາມືຂອງພະເຈົ້າໃນສະຫວັນຈົນເຖິງເວລາທີ່ພະອົງຈະໄດ້ເປັນກະສັດ. ແລ້ວສົງຄາມໃນສະຫວັນຈະເຮັດໃຫ້ຊາຕານຖືກຖິ້ມລົງມາທີ່ແຜ່ນດິນໂລກຈຶ່ງກໍ່ໃຫ້ເກີດໄພພິບັດແກ່ແຜ່ນດິນໂລກ ແລະພະຄລິດຈະປົກຄອງໃນທ່າມກາງສັດຕູຂອງພະອົງ. ຄວາມຊົ່ວຮ້າຍທັງຫມົດຈະຖືກກຳຈັດອອກໄປໂດຍ "ຄວາມທຸກທໍລະມານຢ່າງຫນັກ" ເຊິ່ງຈະເຖິງຈຸດສຸດຍອດໃນສົງຄາມອະລະມະເຄໂດນແລະແລ້ວພັນປີແຫ່ງການປົກຄອງດ້ວຍສັນຕິສຸກຂອງພະຄລິດກໍຈະຕາມມາ.—ມັດທາຍ 24:21, 33, 34; ຄຳປາກົດ 16:14-16.

ຄຳພີໄບເບິນບອກວ່າ "ທ່ານຈົ່ງຮູ້ຈັກຂໍ້ຄວາມນີ້ ຄືວ່າໃນເວລາວັນທັງຫລາຍທີ່ສຸດ [“ຍຸກສຸດທ້າຍ,” *ທ.ປ.*] ນັ້ນ ເວລາຫນ້າກົວຫນ້າຢ້ານຈະບັງເກີດມາ. ເຫດວ່າຄົນທັງຫລາຍຈະຮັກແຕ່ຕົວເອງ ມັກເງິນຄຳ ເປັນຄົນອວດຕົວເປົ່າໆ ຄົນ





*"ເວລາຫນ້າກົວຫນ້າຢ້ານຈະບັງເກີດມາ"*

*ແລະ "ເມື່ອນັ້ນທີ່ສຸດຈະມາເຖິງແລ້ວ"*

ຈອງຫອງ ຄົນຫຍາບຊ້າ ຄົນບໍ່ຟັງພໍ່ແມ່ ຄົນບໍ່ມີຄຸນ ຄົນຖ່ອຍຮ້າຍ ຄົນບໍ່ມີຄວາມຮັກຕາມທຳມະດາ ຄົນບັງຄາ ຄົນເວົ້າຄຳສໍ່ສຽດ ບໍ່ຄຸ້ມຄອງຕົວໃຫ້ດີ ຄົນຮ້າຍດຸ ຄົນບໍ່ຮັກການດີ ຄົນຄິດກະບົດ ຄົນໃຈເລວພອງຂຶ້ນ ຄົນອວດຕົວດ້ວຍຈອງຫອງ ຄົນຮັກການສະຫນຸກສະຫນານຫລາຍກວ່າຮັກພະເຈົ້າ ເຂົາມີຫນ້າມີຕາເຫມືອນຄົນນັບຖືພະເຈົ້າ ແຕ່ວ່າອຳນາດຂອງຄວາມນັບຖືນັ້ນເຂົາປະຕິເສດເສຍ ທ່ານຈົ່ງເວັ້ນເສຍໄປຈາກຄົນຢ່າງນັ້ນດ້ວຍ."—2 ຕີໂມເຕ 3:1-5.

ບາງຄົນອາດຈະຄັດຄ້ານວ່າສິ່ງເຫລົ່ານີ້ເຄີຍເກີດແລ້ວໃນປະຫວັດສາດຂອງມະນຸດ ແຕ່ແທ້ຈິງແລ້ວ ສິ່ງເຫລົ່ານີ້ບໍ່ເຄີຍເກີດຂຶ້ນໃນຂອບເຂດທີ່ໃຫຍ່ສໍ່ານີ້ມາກ່ອນ. ຄືກັບທີ່ນັກປະຫວັດສາດແລະນັກວິຈານໄດ້ກ່າວໄວ້ ສິ່ງທີ່ເກີດຂຶ້ນກັບແຜ່ນດິນໂລກຕັ້ງແຕ່ປີ 1914 ເປັນຕົ້ນມາບໍ່ມີສະໄຫມໃດທຽບໄດ້. (ເບິ່ງຫນ້າ 7.) ໄພພິບັດມີຂອບເຂດທີ່ກວ້າງຂວາງກວ່າເກົ່າ. ນອກຈາກນັ້ນ ລັກສະນະອື່ນໆຂອງສັນຍະລັກທີ່ພະຄລິດໃຫ້ກ່ຽວກັບສະໄຫມສຸດທ້າຍທີ່ຄວນຈະພິຈາລະນາແມ່ນ: ການປະກາດເລື່ອງການປະທັບຂອງພະຄລິດແລະເລື່ອງລາຊະອານາຈັກນັ້ນເປັນໄປໃນລັກສະນະທີ່ໃຫຍ່ໂຕທົ່ວແຜ່ນດິນໂລກຢ່າງບໍ່ເຄີຍມີມາກ່ອນໃນປະຫວັດສາດ. ການຖືກຂົ່ມເຫງຍ້ອນງານປະກາດບໍ່ເຄີຍມີໃຜໄດ້ຮັບທໍ່ກັບພະຍານພະເຢໂຫວາ. ເຂົາເຈົ້າຫລາຍຮ້ອຍຄົນຖືກປະຫານໃນຄ້າຍກັກຂັງຂອງພວກນາຊີ. ຈົນຮອດທຸກມື້ນີ້ ຍັງມີການສັ່ງຫ້າມງານປະກາດຂອງພະຍານພະເຢໂຫວາໃນບາງດິນແດນ ແລະໃນບາງບ່ອນເຂົາເຈົ້າຖືກຈັບກຸມ, ຖືກກັກຂັງ, ຖືກທໍລະມານ ແລະຖືກຂ້າ. ທັງຫມົດນີ້ເປັນສ່ວນຫນຶ່ງຂອງສັນຍະລັກທີ່ພະເຍຊູບອກໄວ້ແລ້ວ.



ດັ່ງທີ່ບອກໄວ້ລ່ວງໜ້າໃນຄຳປາກົດ 11:18 “ພວກຕ່າງປະເທດໄດ້ຮ້າຍ” ຕໍ່ພະຍານຜູ້ສັດຊື່ຂອງພະເຢໂຫວາ ແລະນັ້ນກໍບົ່ງບອກວ່າພະເຢໂຫວາຈະສະແດງ “ຄວາມຄຽດຂອງພະອົງ” ຕໍ່ຊາດເຫລົ່ານັ້ນ. ຄຳພີຂໍ້ດຽວນີ້ກ່າວວ່າ ພະເຈົ້າຈະ “ທຳລາຍຄົນທັງຫລາຍທີ່ກະທຳແຜ່ນດິນໂລກໃຫ້ຊົ່ວໄປ.” ບໍ່ເຄີຍມີຍຸກໃດສະໄໝໃດໃນປະຫວັດສາດມະນຸດທີ່ຄວາມສາມາດໃນການຄ້ຳຈູນຊີວິດຂອງແຜ່ນດິນໂລກຖືກຂູ່ເຂັນປານນີ້ມາກ່ອນ. ແຕ່ບັດນີ້ສະພາບການໄດ້ປ່ຽນໄປ! ນັກວິທະຍາສາດຫລາຍຄົນເຕືອນວ່າ ຖ້າມະນຸດຍັງເຮັດໃຫ້ເກີດມົນລະພິດເທິງແຜ່ນດິນໂລກຕໍ່ໄປ ມະນຸດໃນໂລກຈະຢູ່ບໍ່ໄດ້ອີກ. ແຕ່ວ່າພະເຢໂຫວາ “ໄດ້ສ້າງແຜ່ນດິນໃຫ້ມີຊາວຊົນ” ແລະພະອົງຈະກຳຈັດຜູ້ທີ່ກໍ່ຄວາມເສຍຫາຍແກ່ແຜ່ນດິນໂລກກ່ອນເຂົາເຈົ້າຈະທຳລາຍໝົດທັງໂລກ.—ເອຊາອີ 45:18.

## ພະພອນເທິງແຜ່ນດິນໂລກ ພາຍໃຕ້ລາຊະອານາຈັກ

ຄວາມຄິດທີ່ວ່າ ຈະມີຜູ້ຄົນຢູ່ເທິງແຜ່ນດິນໂລກຖາວອນເປັນນິດໃນແຫ່ງລາຊະອານາຈັກຂອງພະເຈົ້ານັ້ນອາດຈະຟັງແປກສຳລັບຫລາຍຄົນທີ່ເຊື່ອຖືຄຳພີໄບເບິນເຊິ່ງຄິດວ່າທຸກຄົນທີ່ໄດ້ຮັບການຊ່ວຍໃຫ້ລອດຈະໄປຢູ່ສະຫວັນ. ຄຳພີໄບເບິນສະແດງວ່າ ຜູ້ທີ່ຈະໄປຢູ່ສະຫວັນມີຈຳນວນຈຳກັດແລະຜູ້ທີ່ຈະມີຊີວິດຕະຫລອດໄປເທິງແຜ່ນດິນໂລກຈະເປັນມະຫາຊົນໝູ່ໃຫຍ່ຈຳນວນບໍ່ຈຳກັດ. (ຄຳເພງ 37:11, 29; ຄຳປາກົດ 7:9; 14:1-5) ໃນຄຳພີໄບເບິນຢູ່ທີ່ພະທຳດານຽນໄດ້ມີການ



ພະຍາກອນໄວ້ວ່າລາຊະອານາຈັກຂອງພະເຈົ້າທີ່ພະຄລິດປົກຄອງຈະຄອບຄອງທົ່ວແຜ່ນດິນໂລກ.

ຕາມຄຳພະຍາກອນນັ້ນ ລາຊະອານາຈັກຂອງພະຄລິດເປັນຫີນກ້ອນຫນຶ່ງທີ່ຖືກສະກັດອອກມາຈາກສິດທິສູງສຸດໃນການປົກຄອງຂອງພະເຢໂຫວາເຊິ່ງປຽບຄືກັບພູເຂົາ. ຫີນກ້ອນນັ້ນໄດ້ກະທົບແລະທຳລາຍຮູບປັ້ນທີ່ຫມາຍເຖິງຊາດມະຫາອຳນາດຕ່າງໆຂອງໂລກນີ້ ແລະ "ຫີນທີ່ໄດ້ຖືກຮູບກໍໄດ້ບັງເກີດເປັນພູໃຫຍ່ທີ່ໃຫ້ແຜ່ນດິນໂລກເຕັມ." ຄຳພະຍາກອນນັ້ນກ່າວຕໍ່ໄປວ່າ "ໃນຄາວກະສັດທັງຫລາຍນັ້ນ ພະເຈົ້າແຫ່ງຟ້າສະຫວັນຈະຕັ້ງພະລາຊະອານາຈັກອັນຫນຶ່ງໄວ້ທີ່ຈະບໍ່ຈິບຫາຍສັກເທື່ອ. ແລະພະລາຊະອານາຈັກນີ້ຈະບໍ່ກາຍເປັນຂອງຊາວປະເທດອື່ນ. ມັນຈະໃຫ້ລາຊະອານາຈັກທັງປວງນີ້ຫັກແຕກຈິບຫາຍ ແຕ່ວ່າຕົວເອງຈະຕັ້ງຢູ່ສືບໆໄປເປັນນິດ."—ດານຽນ 2:34, 35, 44.


ນິແຕລັນ


ນິເຊເລັຍ

ລາຊະອານາຈັກນີ້ແລະຄວາມຫວັງທີ່ໄດ້ມາຈາກພະຄຳພີເລື່ອງຊີວິດຕະຫລອດໄປເທິງແຜ່ນດິນໂລກທີ່ໄດ້ສະສາງໃຫ້ສະອາດແລະງົດງາມແລ້ວນັ້ນແຫລະເປັນເລື່ອງທີ່ພະຍານພະເຢໂຫວາຢາກບອກກັບເຈົ້າ. ຫລາຍລ້ານຄົນທີ່ມີຊີວິດຢູ່ໃນຕອນນີ້ແລະອີກຫລາຍໆລ້ານຄົນທີ່ຢູ່ໃນບ່ອນຝັງສົບກໍຈະມີໂອກາດທີ່ຈະຢູ່ຫັ້ນຕະຫລອດໄປ. ຕໍ່ຈາກນັ້ນ ພາຍໃຕ້ການປົກຄອງພັນປີຂອງພະເຍຊູຄລິດ ພະປະສົງເດີມທີ່ພະເຢໂຫວາໄດ້ສ້າງແຜ່ນດິນໂລກແລະໃຫ້ມະນຸດຄູ່ທຳອິດຢູ່ຫັ້ນກໍຈະສຳເລັດເປັນຈິງ. ອຸທິຍານເທິງແຜ່ນດິນໂລກນີ້ຈະບໍ່ເປັນຕາເບື່ອເລີຍ. ອາດາມໄດ້ຮັບມອບຫມາຍໃຫ້ເຮັດວຽກໃນສວນເອເດນຢ່າງໃດ ມະນຸດຊາດກໍຈະມີໂຄງການທີ່ທ້າທາຍຄວາມສາມາດໃນການເບິ່ງແຍງແຜ່ນດິນໂລກແລະຕົ້ນໄມ້ພ້ອມທັງສັດທີ່ຢູ່ໃນໂລກຢ່າງນັ້ນເຊັ່ນກັນ. ເຂົາເຈົ້າ "ຈະຊົມຊື່ນຍິນດີກັບສິ່ງທີ່ຫາມາໄດ້ນັ້ນຢ່າງເຕັມທີ່."—ເອຊາອີ 65:22, *ທ.ປ.;* ຕົ້ນເດີມ 2:15.

ເປັນໄປໄດ້ທີ່ຈະຍົກຫລາຍຂໍ້ຈາກຄຳພີຂຶ້ນມາເພື່ອສະແດງວ່າສະພາບການຕ່າງໆເຫລົ່ານັ້ນຈະເກີດຂຶ້ນ ເມື່ອຄຳອະທິດຖານທີ່ພະເຍຊູສອນໄວ້ໄດ້ຮັບຄຳຕອບທີ່ວ່າ "ຂໍໃຫ້ແຜ່ນດິນຂອງພະອົງມາຕັ້ງຢູ່. ນ້ຳໃຈຂອງພະອົງສຳເລັດແລ້ວໃນສະຫວັນຢ່າງໃດ ຂໍໃຫ້ສຳເລັດທີ່ແຜ່ນດິນໂລກຢ່າງນັ້ນ." (ມັດທາຍ 6:10) ຢ່າງໃດກໍຕາມ ຕອນນີ້ໃຫ້ເຮົາເບິ່ງພຽງຕົວຢ່າງຫນຶ່ງທີ່ອ່ານວ່າ "ເຮົາໄດ້ຍິນສຽງປາກດັງອັນໃຫຍ່ມາຈາກພະທີ່ນັ່ງວ່າ 'ຈົ່ງເບິ່ງ ຈຳຫນັກຂອງພະເຈົ້າກໍຢູ່ກັບມະນຸດແລ້ວ ແລະພະອົງຈະສະຖິດຢູ່ກັບເຂົາແລະເຂົາຈະເປັນພວກຂອງພະອົງ ແລະພະເຈົ້າເອງຈະຢູ່ກັບເຂົາ. ເປັນພະເຈົ້າຂອງເຂົາ. ແລະພະເຈົ້າຈະເຊັດນ້ຳຕາທັງຫລາຍຈາກຕາຂອງເຂົາ ແລະຄວາມຕາຍຈະບໍ່ມີຕໍ່ໄປ ແລະຄວາມທຸກໂສກ ແລະຮ້ອງໄຫ້ ແລະເຈັບປວດຈະບໍ່ມີຕໍ່ໄປ. ເຫດວ່າສິ່ງທັງຫລາຍທີ່ເປັນເມື່ອກ່ອນນັ້ນກໍລ່ວງໄປແລ້ວ.' ແລະພະອົງຜູ້ໄດ້ນັ່ງທີ່ພະທີ່ນັ່ງນັ້ນໄດ້ບອກວ່າ 'ຈົ່ງເບິ່ງ ເຮົາສ້າງສັບພະທຸກສິ່ງຂຶ້ນໃຫມ່.' ແລະພະອົງບອກວ່າ 'ຈົ່ງຂຽນໄວ້ເຖີ້ນ ເພາະວ່າຖ້ອຍຄຳທັງຫລາຍນີ້ເປັນຄຳສັດຊື່ແລະທ່ຽງແທ້.' "—ຄຳປາກົດ 21: 3-5.